Employment Development Department
State of California

# ປະກັນໄພຫວ່າງງານ

ປະກັນໄພຫວ່າງງານ (UI) ແມ່ນໂຄງການນາຍຈ້າງຈ່າຍເງິນໃຫ້ ທີ່ໃຫ້ການປ່ຽນແທນລາຍຮັບບາງສ່ວນຊົ່ວຄາວ ເມື່ອທ່ານຫວ່າງງານ ຫຼື ມີຊົ່ວໂມງເຮັດວຽກຫຼຸດລົງ ແລະ ບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບທຸກຢ່າງ.

## ຂ້ອຍມີສິດໄດ້ຮັບປະກັນໄພຫວ່າງງານບໍ?

ທ່ານອາດຈະຍື່ນຂໍ້ຮຽກຮ້ອງຂໍເງິນຊ່ວຍເຫຼືອປະກັນໄພຫວ່າງງານ (UI) ໄດ້ ຖ້າທ່ານບໍ່ມີວຽກເຮັດ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ. ເພື່ອໃຫ້ມີສິດໄດ້ຮັບເງິນຊ່ວຍເຫຼືອ UI, ທ່ານຕ້ອງບໍ່ມີວຽກເຮັດໂດຍທີ່ບໍ່ແມ່ນຄວາມຜິດຂອງທ່ານເອງ ແລະ ຍັງມີຄວາມສາມາດທາງຮ່າງກາຍທີ່ຈະເຮັດວຽກໄດ້, ພ້ອມທີ່ຈະຮັບວຽກໄດ້ ແລະ ກຳລັງຊອກວຽກເຮັດຢູ່. ສຳລັບບັນຊີລາຍການເຕັມຂອງເງື່ອນໄຂກຳນົດການມີສິດໄດ້ຮັບ, ໃຫ້ເຂົ້າເບິ່ງ **www.edd.ca.gov/Unemployment/Eligibility.htm**.

## ຂ້ອຍຄວນຍື່ນຂໍ້ຮຽກຮ້ອງຂອງຂ້ອຍເມື່ອໃດ?

ທ່ານຄວນຍື່ນຂໍ້ຮຽກຮ້ອງຢູ່ໃນອາທິດທຳອິດ ເມື່ອທ່ານເສຍວຽກໄປ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ. ຂໍ້ຮຽກຮ້ອງຂອງທ່ານຈະຖືກຍື່ນໄປໃນວັນອາທິດຂອງອາທິດທີ່ໃບຄຳຮ້ອງຂອງທ່ານຖືກສົ່ງໄປ.

**ສິ່ງສຳຄັນ:** ການຍື່ນຊ້າອາດຈະສົ່ງຜົນຕໍ່ການຈ່າຍເງິນຊ່ວຍເຫຼືອຊັກຊ້າ.

## ຂ້ອຍສາມາດຍື່ນຂໍປະກັນໄພຫວ່າງງານໄດ້ແນວໃດ?

ທ່ານອາດຈະຍື່ນຂໍ UI ໄດ້ຜ່ານໜຶ່ງໃນບັນດາວິທີການຕໍ່ໄປນີ້ຄື:

➢ **ອອນລາຍ**
UI Online[SM] ແມ່ນວິທີການທີ່ໄວສຸດ ແລະ ສະດວກສຸດທີ່ຈະຍື່ນຂໍ້ຮຽກຮ້ອງ UI ຂອງທ່ານ. ເຂົ້າເບິ່ງ **www.edd.ca.gov/UI_Online** ເພື່ອເລີ່ມຕົ້ນ. ທ່ານສາມາດຍື່ນຂໍ້ຮຽກຮ້ອງຂອງທ່ານດ້ວຍ UI Online ໄດ້ໃນລະຫວ່າງເວລາທີ່ໄດ້ເຮັດເປັນລາຍການໄວ້ຢູ່ລຸ່ມນີ້ຄື:

| **ວັນໃນອາທິດ** | **ເວລາທີ່ຍື່ນໄດ້** |
|---|---|
| ວັນຈັນ | 4 ໂມງເຊົ້າ – 10 ໂມງແລງ |
| ວັນອັງຄານ - ວັນສຸກ | 2 ໂມງເຊົ້າ – 10 ໂມງແລງ |
| ວັນເສົາ | 2 ໂມງເຊົ້າ – 8 ໂມງແລງ |
| ວັນອາທິດ | 5 ໂມງເຊົ້າ – 8:30 ໂມງແລງ |

➢ **ໂທລະສັບ**
ຜູ້ຕາງໜ້າພ້ອມເຮັດວຽກຢູ່ໃນບັນດາເບີໂທຟຣີຕໍ່ໄປນີ້, ວັນຈັນ ຫາ ວັນສຸກ ລະຫວ່າງ **8 ໂມງເຊົ້າ ຫາ 12 ໂມງທ່ຽງ** (ເວລາປາຊີຟິກ) ຍົກເວັ້ນວັນພັກທາງການຂອງລັດ.

| | | | | | |
|---|---|---|---|---|---|
| **ພາສາອັງກິດ** | **1-800-300-5616** | **ພາສາແຄນໂຕນີສ** | **1-800-547-3506** | **ພາສາຫວຽດນາມ** | **1-800-547-2058** |
| **ພາສາສະເປນ** | **1-800-326-8937** | **ພາສາແມນດາຣິນ** | **1-866-303-0706** | **TTY** | **1-800-815-9387** |

➢ **ທາງແຟັກ ຫຼື ທາງໄປສະນີ**
ຍື່ນຂໍ້ຮຽກຮ້ອງ UI ຂອງທ່ານ ໂດຍການເຂົ້າເຖິງໃບຄຳຮ້ອງຂໍ UI ສະບັບເຈ້ຍຢູ່ທີ່ **www.edd.ca.gov/unemployment/Filing_a_Claim.htm**. ເພື່ອການດຳເນີນການທີ່ປອດໄພ ແລະ ໄວຂຶ້ນ, ໃຫ້ແຟັກໃບຄຳຮ້ອງທີ່ປະກອບກັບຖ້ວນໄປຫາເບີທີ່ເຮັດເປັນລາຍການໄວ້ຢູ່ໃນແບບຟອມ. ຖ້າທ່ານສົ່ງໃບຄຳຮ້ອງຂອງທ່ານໂດຍທາງໄປສະນີ, ໃຫ້ໃຊ້ທີ່ຢູ່ຕາມທີ່ມີຢູ່ໃນແບບຟອມ ແລະ ໃຫ້ເວລາເພີ່ມເຕີມສຳລັບການດຳເນີນການ.

## ຂ້ອຍຈຳເປັນຕ້ອງໄດ້ສະໜັກຂໍ້ມູນໃດແດ່?

ເພື່ອໃຫ້ແນ່ໃຈວ່າ ຂໍ້ຮຽກຮ້ອງຂອງທ່ານໄດ້ຖືກຍື່ນໄວເທົ່າທີ່ໄວໄດ້, ທ່ານຈຳເປັນຕ້ອງໄດ້ໃຫ້ຂໍ້ມູນສ່ວນຕົວເຊັ່ນ: ຊື່ທີ່ທ່ານໃຊ້ໃນຂະນະທີ່ກຳລັງເຮັດວຽກ, ເລກປະກັນສັງຄົມຂອງທ່ານ, ທີ່ຢູ່ທາງໄປສະນີ ແລະ ທີ່ຢູ່ອາໄສຂອງທ່ານ ແລະ ບັນດາຂໍ້ມູນຕໍ່ໄປນີ້ຂອງທ່ານຄື:

- ☐ ຂໍ້ມູນນາຍຈ້າງຜູ້ສຸດທ້າຍ ລວມທັງຊື່ບໍລິສັດ, ຊື່ຫົວໜ້າສາຍງານ, ທີ່ຢູ່ (ທາງໄປສະນີ ແລະ ຕົວຈິງ) ແລະ ເບີໂທລະສັບ, ໂດຍບໍ່ຕ້ອງຄຳນຶງວ່າ ທ່ານໄດ້ເຮັດວຽກກັບນາຍຈ້າງຜູ້ສຸດທ້າຍນັ້ນດົນເທົ່າໃດແລ້ວ.
- ☐ ວັນທີສຸດທ້າຍທີ່ໄດ້ເຮັດວຽກ ແລະ ເຫດຜົນທີ່ທ່ານບໍ່ໄດ້ເຮັດວຽກອີກ.
- ☐ ເງິນທີ່ຫາມາໄດ້ລວມໃນອາທິດສຸດທ້າຍທີ່ທ່ານໄດ້ເຮັດວຽກ, ເລີ່ມຕົ້ນໃນມື້ວັນອາທິດ ແລະ ສິ້ນສຸດໃນມື້ເຮັດວຽກສຸດທ້າຍຂອງທ່ານ.
- ☐ ຂໍ້ມູນກ່ຽວກັບນາຍຈ້າງຜ່ານມາທັງໝົດໃນລະຫວ່າງ 18 ເດືອນຜ່ານມາ, ລວມທັງຊື່, ທີ່ຢູ່ (ທາງໄປສະນີ ແລະ ຕົວຈິງ), ວັນທີຂອງການເຮັດວຽກ, ຄ່າຈ້າງທັງໝົດທີ່ໄດ້ຮັບ, ຊົ່ວໂມງເຮັດວຽກຕໍ່ອາທິດ, ອັດຕາຄ່າແຮງຈ່າຍຕໍ່ຊົ່ວໂມງ ແລະ ເຫດຜົນທີ່ທ່ານບໍ່ໄດ້ເຮັດວຽກອີກ.
- ☐ *Notice to Federal Employees About Unemployment Insurance*, Standard Form 8 (ແຈ້ງການເຖິງລູກຈ້າງຂອງລັດຖະບານກາງກ່ຽວກັບປະກັນໄພການຫວ່າງງານ) (ອະດີດລູກຈ້າງລັດຖະບານກາງເທົ່ານັ້ນ)
- ☐ DD 214 Member 4 copy (ສະມາຊິກ DD 214 ສຳເນົາ 4 ຊຸດ) (ອະດີດທະຫານເທົ່ານັ້ນ)
- ☐ ສະຖານະການເປັນພົນລະເມືອງຂອງທ່ານ ແລະ ຖ້າທ່ານບໍ່ແມ່ນພົນລະເມືອງສະຫະລັດ ແລະ ທ່ານໄດ້ຂຶ້ນທະບຽນກັບໜ່ວຍງານການເປັນພົນລະເມືອງ ແລະ ການເຂົ້າເມືອງຂອງສະຫະລັດ, ຂໍ້ມູນຈາກເອກະສານການອະນຸຍາດໃຫ້ເຮັດວຽກຂອງທ່ານເຊັ່ນ: ເລກທະບຽນຕ່າງດ້າວ, ເລກບັດ ແລະ ວັນທີໝົດອາຍຸ (ຖ້າມີ).

## ມີໄລຍະລໍຖ້າບໍ?
ທຸກຂໍ້ຮຽກຮ້ອງມີໄລຍະລໍຖ້າບໍ່ໄດ້ຈ່າຍເງິນໃຫ້ໜຶ່ງອາທິດ. ໄລຍະລໍຖ້າຂອງທ່ານບໍ່ສາມາດເລີ່ມຕົ້ນຂຶ້ນໄດ້ຈົນກ່ວາຂໍ້ຮຽກຮ້ອງຂອງທ່ານຖືກຍື່ນແລ້ວ. ເພື່ອໃຫ້ບໍລິການໄລຍະລໍຖ້າ, ທ່ານຕ້ອງຢັ້ງຢືນເງິນຊ່ວຍເຫຼືອ ແລະ ບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບອື່ນໆທຸກຢ່າງສຳລັບອາທິດໄລຍະລໍຖ້າຂອງທ່ານ.

## ສິ່ງທີ່ຈະເກີດຂຶ້ນຕໍ່ໄປແມ່ນຫຍັງ?
ຫຼັງຈາກທ່ານຍື່ນ, ທ່ານຈະໄດ້ຮັບຂໍ້ມູນທາງໄປສະນີກ່ຽວກັບຂໍ້ຮຽກຮ້ອງຂອງທ່ານ, ໂຄງການ UI ແລະ ໄດ້ຮັບ *Continued Claim Form*, DE 4581 (ແບບຟອມຮຽກຮ້ອງຕໍ່1) ໃບທຳອິດຂອງທ່ານໂດຍທາງໄປສະນີຕ່າງຫາກ. ລູກຄ້າສ່ວນໃຫຍ່ຍັງຈະໄດ້ຮັບ *Notice of Requirement to Register for Work*, DE 8405 (ແຈ້ງການເງື່ອນໄຂກຳນົດ ເພື່ອລົງທະບຽນເຮັດວຽກ), ທີ່ແນະນຳໃຫ້ພວກເຂົາລົງທະບຽນສຳລັບ CalJOBS℠, ເຊິ່ງເປັນລະບົບແລກປ່ຽນແຮງງານອອນລາຍຂອງລັດຄາລີຟໍເນຍນຳອີກ. ຢ່າລືມອ່ານ ແລະ ຕອບຮັບທຸກຄຳສະເໜີ ເພື່ອຫຼີກລ່ຽງຄວາມຊັກຊ້າໃນການຊຳລະ.

## ຂ້ອຍຢັ້ງຢືນຂໍເງິນຊ່ວຍເຫຼືອໄດ້ແນວໃດ?
ເພື່ອຂໍໃຫ້ຊຳລະເງິນຊ່ວຍເຫຼືອ, ທ່ານຕ້ອງໃຫ້ຂໍ້ມູນການມີສິດໄດ້ຮັບແກ່ EDD ທຸກໆສອງອາທິດ. ອັນນີ້ຮູ້ຈັກໃນນາມການຢັ້ງຢືນເງິນຊ່ວຍເຫຼືອ. ວິທີໄວທີ່ສຸດທີ່ຈະຢັ້ງຢືນແມ່ນຜ່ານ UI Online. ທ່ານອາດຈະຢັ້ງຢືນໂດຍທາງໂທລະສັບນຳກໍ່ໄດ້ດ້ວຍການໃຊ້ EDD Tele-Cert℠ ທີ່ເບີ **1-866-333-4606** ຫຼື ໂດຍການສົ່ງທາງໄປສະນີຢູ່ໃນ *Continued Claim form*, DE 4581 (ແບບຟອມຮຽກຮ້ອງຕໍ່), ຕາມວັນທີສົ່ງທາງໄປສະນີຢູ່ໃນແບບຟອມ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງ **www.edd.ca.gov/unemployment/Certifying_for_Benefits_Process.htm**.

## ຂໍ້ມູນການຊຳລະ
ຂໍ້ມູນການຊຳລະໄດ້ຮັບການອັບເດດປະຈຳວັນ ແລະ ມີໃຫ້ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດຜ່ານບັນຊີ UI Online ຂອງທ່ານ ໂດຍການໂທຫາໜ່ວຍບໍລິການຕົວເອງຂອງປະກັນໄພຫວ່າງງານ (UI Self-Service) ທີ່ເບີ **1-866-333-4606**.

## ຄຳຖາມທີ່ຖາມເລື້ອຍໆ
- **UI ຈ່າຍໃຫ້ຫຼາຍປານໃດ?**
  - ຂອບເຂດຈຳນວນເງິນຊ່ວຍເຫຼືອປະຈຳອາທິດຈາກຕ່ຳສຸດ $40 ຫາສູງສຸດ $450 ຂຶ້ນຢູ່ກັບລາຍໄດ້ປະຈຳງວດໄລຍະພື້ນຖານຂອງທ່ານ.

- **UI Online℠ ແມ່ນຫຍັງ?**
  - UI Online ແມ່ນວິທີການຍື່ນຂໍ້ຮຽກຮ້ອງ, ຢັ້ງຢືນຜົນປະໂຫຍດ ແລະ ເບິ່ງຂໍ້ຮຽກຮ້ອງ ແລະ ຂໍ້ມູນການຊຳລະໄດ້ໄວ, ປອດໄພ ແລະ ສະດວກ. ເພື່ອເຂົ້າເຖິງບັນຊີຂອງທ່ານ ຫຼື ເພື່ອລົງທະບຽນ, ເຂົ້າເບິ່ງ **www.edd.ca.gov/UI_Online**.

- **ຂ້ອຍສາມາດຖາມຄຳຖາມກ່ຽວກັບຂໍ້ຮຽກຮ້ອງຂອງຂ້ອຍໄດ້ແນວໃດ?**
  - ວິທີດີທີ່ສຸດທີ່ຈະຖາມຄຳຖາມແມ່ນຜ່ານ UI Online. ຫຼັງຈາກທ່ານເຂົ້າສູ່ລະບົບ, ເລືອກ **Contact Us (ຕິດຕໍ່ພວກເຮົາ)** ພ້ອມກັບໝວດ ແລະ ຫົວຂໍ້ ແລະ ຈາກນັ້ນສົ່ງຄຳຖາມຂອງທ່ານ. ເມື່ອທາງ EDD ຕອບ, ທ່ານຈະໄດ້ຮັບແຈ້ງໂດຍທາງອີເມວ. ທ່ານຍັງອາດຈະສົ່ງຄຳຖາມດ້ວຍການໃຊ້ Ask EDD ໄດ້ນຳອີກຢູ່ທີ່ **askedd.edd.ca.gov** ຫຼື ໂດຍການໂທຫາໜຶ່ງໃນເບີໂທລະສັບທີ່ມີຢູ່ດ້ານຫຼັງຂອງແບບຟອມນີ້.

- **ເປັນຫຍັງຂ້ອຍຈຶ່ງໄດ້ນັດໝາຍເວລາເພື່ອເຮັດການສຳພາດທາງໂທລະສັບ?**
  - ຖ້າ EDD ຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການມີສິດໄດ້ຮັບຂອງທ່ານ ເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອ, ທ່ານຈະໄດ້ຮັບແຈ້ງໂດຍທາງໄປສະນີກ່ຽວກັບວັນທີ, ເວລາ ແລະ ຈຸດປະສົງການນັດໝາຍທາງໂທລະສັບຂອງທ່ານ. ການບໍ່ພ້ອມມາສຳພາດຂອງທ່ານສາມາດເຮັດໃຫ້ເກີດຄວາມຊັກຊ້າ ຫຼື ມີການປະຕິເສດເງິນຊ່ວຍເຫຼືອໄດ້.

## ຊັບພະຍາກອນດ້ານອື່ນໆ
ທາງ EDD ໃຫ້ການບໍລິການຈ້າງງານຄືນໃໝ່ໃນຂອບເຂດກ້ວາງຂວາງດ້ວຍການເປັນຄູ່ຮ່ວມງານກັບອົງການຂອງລັດ ແລະ ຂອງທ້ອງຖິ່ນໂດຍບໍ່ມີຄ່າໃຊ້ຈ່າຍໃດໆ. ການບໍລິການເຫຼົ່ານີ້ແມ່ນໄດ້ຈັດໃຫ້ໃນທົ່ວລັດຜ່ານ America's Job Center of California℠ (AJCC, ສູນອາຊີບລັດຄາລີຟໍເນຍຂອງສະຫະລັດ), ໃຫ້ຜົນປະໂຫຍດແກ່ຜູ້ຊອກວຽກເຮັດ, ຊາວໜຸ່ມ, ນັກເຮົາເກົ່າ ແລະ ຜູ້ພິການດ້ວຍການບໍລິການຕໍ່ໄປນີ້ຄື:

- ການຊ່ວຍເຫຼືອການຊອກວຽກເຮັດ
- ກອງປະຊຸມ
- ຂໍ້ມູນກ່ຽວກັບໂຄງການຝຶກອົບຮົມ
- ການເຂົ້າໃຊ້ໂທລະສັບ, ອິນເຕີເນັດ, ເຄື່ອງພິມ, ເຄື່ອງແຟັກ ແລະ ຈັກກ໊ອບປີ້
- ບັນຊີລາຍຊື່ວຽກຜ່ານທາງ CalJOBS℠
- ຂໍ້ມູນກ່ຽວກັບຄ່າຈ້າງ ແລະ ແນວໂນ້ມ
- ການສົ່ງຕໍ່ໄປຫາໜ່ວຍງານອື່ນ ແລະ ອື່ນໆ

ເພື່ອຊອກຫາ AJCC ຢູ່ໃກ້ທ່ານ, ເຂົ້າເບິ່ງ **www.edd.ca.gov/Office_Locator** ຫຼື ໂທຫາສາຍດ່ວນ U.S. Department of Labor Employment and Training Administration (ກະຊວງບໍລິຫານການຈ້າງແຮງງານ ແລະ ການຝຶກອົບຮົມຂອງສະຫະລັດ) ທີ່ເບີ **1-877-US 2 JOBS (1-877-872-5627)**. ມີຂໍ້ມູນໃຫ້ເປັນຫຼາຍພາສາ. ການເຂົ້າເຖິງ TTY ແມ່ນມີຢູ່ທີ່ເບີ 1-877-889-5627.